ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1163 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 01 ກັນຍາ 2022

## ແຈ້ງການ

**ເຖິງ:** ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ.

**ເລື່ອງ:** ແຈ້ງປັບຂຶ້ນລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ.

- ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 168/ຄປຈ, ລົງວັນທີ 06 ມິຖຸນາ 2022.
- ອີງຕາມ ດຳລັດວ່າດ້ວຍ ການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010.
- ດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 631/ຫສນຍ, ລົງວັນທີ 09 ພຶດສະພາ 2022.
- ອີງຕາມ ທິດຊີ້ນຳຂອງທ່ານຮອງນາຍົກລັດຖະມົນຕີ ຜູ້ຊີ້ນຳຂົງເຂດເສດຖະກິດ ທັງເປັນຫົວໜ້າຄະນະສະເພາະກິດ 36/ນຍ ຄັ້ງວັນທີ 01 ກັນຍາ 2022.
- ອີງຕາມ ສະພາບການເໜັງຕີງຂຶ້ນ-ລົງ ລາຄານ້ຳມັນເຊື້ອໄຟ ໃນຕະຫຼາດໂລກ ແລະ ໃນຂົງເຂດ.

ເພື່ອເຮັດໃຫ້ການປັບລາຄານ້ຳມັນເຊື້ອໄຟ ພາຍໃນປະເທດ ຂຶ້ນ-ລົງ ຕາມການເໜັງຕີງຂອງຕະຫຼາດໂລກ ທັງນີ້ ກໍເພື່ອຮັບປະກັນການສະໜອງນ້ຳມັນເຊື້ອໄຟ ໃຫ້ເປັນປົກກະຕິ.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງໄດ້ອອກແຈ້ງການ ເຖິງ ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ ຊາບ ແລະ ປະຕິບັດ ດັ່ງນີ້:**

1. ຫຼຸດຄັງແຮນ້ຳມັນແອັດຊັງພິເສດ ລົງ 380 ກີບ/ລິດ ແລະ ຄັງແຮນ້ຳມັນກາຊວນ ຫຼຸດລົງ 410 ກີບ/ລິດ.
2. ຫຼຸດຄ່າບໍລິການສະເພາະນ້ຳມັນກາຊວນຂອງ ບໍລິສັດນຳເຂົ້າ ແລະ ສົ່ງອອກ ລົງ 150 ກີບ/ລິດ, ຫຼຸດຄ່າບໍລິການບໍລິສັດຈຳໜ່າຍພາຍໃນ ແລະ ປ້ຳນ້ຳມັນເຊື້ອໄຟ ລົງ 100 ກີບ/ລິດ/ຊະນິດ.
3. ປັບຂຶ້ນລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ທຸກຊະນິດຄື: ນ້ຳມັນແອັດຊັງພິເສດ 120 ກີບ/ລິດ, ນ້ຳມັນແອັດຊັງທຳມະດາ ປັບຂຶ້ນ 710 ກີບ/ລິດ ແລະ ນ້ຳມັນກາຊວນ ປັບຂຶ້ນ 950 ກີບ/ລິດ.

ພະແນກຄຸ້ມຄອງສິນຄ້າ ແລະ ລາຄາ, ກົມການຄ້າພາຍໃນ ໂທ: 021 412436

ລາຄາຕາມຕາຕະລາງລຸ່ມນີ້ ແມ່ນຈຸດນະຄອນຫຼວງວຽງຈັນ:

ຫົວໜ່ວຍ:ລິດ.

| ລ/ດ | ຊະນິດ | ລາຄາຂາຍຍ່ອຍ | | ເພີ່ມ/ຫຼຸດ | | ໝາຍເຫດ |
|---|---|---|---|---|---|---|
| | | ປະຈຸບັນ | ໃໝ່ | | | |
| | | ກີບ | ກີບ | ກີບ | % | |
| 1 | ອຊ ພິເສດ | 25.750 | 25.870 | 120 | 0,47 | |
| 2 | ອຊ ທຳມະດາ | 19.240 | 19.950 | 710 | 3,69 | |
| 3 | ກາຊວນ | 18.860 | 19.810 | 950 | 5,04 | |

(ສຳລັບລາຄາຂາຍຍ່ອຍໃນເຂດເທດສະບານແຂວງ ແມ່ນມີເອກະສານຊ້ອນທ້າຍ).

4. ລາຄາໃໝ່ນີ້ ແມ່ນໃຫ້ເລີ່ມປະຕິບັດວັນທີ 02 ກັນຍາ 2022, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ.
5. ການຄິດໄລ່ພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງ ຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ໃນໂຄງສ້າງລາຄານ້ຳມັນເຊື້ອໄຟ ສະບັບເລກທີ 0799/ກຄພນ, ລົງວັນທີ 31 ສິງຫາ 2022 ຈົນກວ່າຈະມີການປ່ຽນແປງ.
6. ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນຂ້າງເທິງນີ້ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນ ໃຫ້ບໍລິການຢ່າງເປັນປົກກະຕິ.
7. ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 1114/ອຄ, ລົງວັນທີ 24 ສິງຫາ 2022.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ລັດຖະມົນຕີ

ມະໄລທອງ ກົມມະສິດ

ບ່ອນສົ່ງ:

- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອເປັນບ່ອນອີງ).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ).
- ຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (ເພື່ອຊາບ).
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ (ເພື່ອຕິດຕາມ).

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ເລກທີ: 0799/ກຄພນ

ນະຄອນຫຼວງວຽງຈັນ, ວັນທີ: 31 ສິງຫາ 2022

# ໂຄງສ້າງລາຄານ້ຳມັນເຊື້ອໄຟ

ຫົວໜ່ວຍ: ກີບ/ລິດ.

**ບໍລິສັດ ນຳເຂົ້າ ແລະ ສົ່ງອອກ (ຫ້ອງ 1–13)**

| ບ່ອນ | ຊະນິດ | 1 ລາຄາ CIF ຄິດໄລ່ພາສີ ໂດລາສະຫະລັດ | 2 ລາຄາ CIF ຄິດໄລ່ພາສີ ກີບ | 3 ພາສີ ຂາເຂົ້າ | 4 ອກຊ ຂາເຂົ້າ | 5 ກທ ທາງ | 6 ຄັງແຮ | 7 ລວມ ຕົ້ນທຶນ | 8 ອມພ ນຳເຂົ້າ | 9 ຄ່າ ບໍລິການ | 10 ບໍ່ລວມ ອມພ | 11 ອມພ 7% | 12 ລວມ ອມພ | 13 ອມພ ມອບຕື່ມ |
|---|---|---|---|---|---|---|---|---|---|---|---|---|---|---|
| ນ.ວ | ອ/ຊ ພິເສດ | $ 0.7963 | 12,269 | 2,454 | 5,889 | 520 | 1,100 | 22,231 | 1,443 | 750 | 22,981 | 1,609 | 24,590 | 166 |
| | ອ/ຊ ທຳມະດາ | $ 0.7700 | 11,863 | 1,780 | 682 | 520 | 1,700 | 16,545 | 1,003 | 800 | 17,345 | 1,214 | 18,559 | 211 |
| | ກາຊວນ | $ 1.0258 | 15,805 | 790 | - | 520 | - | 17,115 | 1,162 | 600 | 17,715 | 1,240 | 18,955 | 78 |
| ທ່າງ່ອນ | ອ/ຊ ພິເສດ | $ 0.7974 | 12,286 | 2,457 | 5,897 | 520 | 1,100 | 22,260 | 1,445 | 750 | 23,010 | 1,611 | 24,620 | 166 |
| | ອ/ຊ ທຳມະດາ | $ 0.7716 | 11,887 | 1,783 | 684 | 520 | 1,700 | 16,574 | 1,005 | 800 | 17,374 | 1,216 | 18,590 | 211 |
| | ກາຊວນ | $ 1.0275 | 15,831 | 792 | - | 520 | - | 17,142 | 1,164 | 600 | 17,742 | 1,242 | 18,984 | 78 |
| ສະຫວັນ | ອ/ຊ ພິເສດ | $ 0.7974 | 12,286 | 2,457 | 5,897 | 520 | 1,100 | 22,260 | 1,445 | 750 | 23,010 | 1,611 | 24,620 | 166 |
| | ອ/ຊ ທຳມະດາ | $ 0.7716 | 11,888 | 1,783 | 684 | 520 | 1,700 | 16,574 | 1,005 | 800 | 17,374 | 1,216 | 18,590 | 211 |
| | ກາຊວນ | $ 1.0275 | 15,831 | 792 | - | 520 | - | 17,142 | 1,164 | 600 | 17,742 | 1,242 | 18,984 | 78 |
| ຈຳປາສັກ | ອ/ຊ ພິເສດ | $ 0.7985 | 12,302 | 2,460 | 5,905 | 520 | 1,100 | 22,288 | 1,447 | 750 | 23,038 | 1,613 | 24,651 | 166 |
| | ອ/ຊ ທຳມະດາ | $ 0.7731 | 11,911 | 1,787 | 685 | 520 | 1,700 | 16,603 | 1,007 | 800 | 17,403 | 1,218 | 18,621 | 211 |
| | ກາຊວນ | $ 1.0292 | 15,857 | 793 | - | 520 | - | 17,170 | 1,165 | 600 | 17,770 | 1,244 | 19,014 | 78 |
| ບໍ່ແກ້ວ | ອ/ຊ ພິເສດ | $ 0.7999 | 12,324 | 2,465 | 5,916 | 520 | 1,100 | 22,324 | 1,449 | 750 | 23,074 | 1,615 | 11,481 | 166 |
| | ອ/ຊ ທຳມະດາ | $ 0.7751 | 11,942 | 1,791 | 687 | 520 | 1,700 | 16,640 | 1,009 | 800 | 17,440 | 1,221 | 18,661 | 211 |
| | ກາຊວນ | $ 1.0315 | 15,892 | 795 | - | 520 | - | 17,207 | 1,168 | 600 | 17,807 | 1,246 | 19,053 | 78 |
| ຊຽງຂວາງ | ອ/ຊ ພິເສດ | $ 0.8030 | 12,372 | 2,474 | 5,938 | 520 | 1,100 | 22,405 | 1,455 | 750 | 23,155 | 1,621 | 24,775 | 166 |
| | ອ/ຊ ທຳມະດາ | $ 0.7796 | 12,011 | 1,802 | 691 | 520 | 1,700 | 16,724 | 1,015 | 800 | 17,524 | 1,227 | 18,750 | 211 |
| | ກາຊວນ | $ 1.0366 | 15,971 | 799 | - | 520 | - | 17,289 | 1,174 | 600 | 17,889 | 1,252 | 19,142 | 78 |
| ໄຊຍະບູລີ | ອ/ຊ ພິເສດ | $ 0.7999 | 12,324 | 2,465 | 5,916 | 520 | 1,100 | 22,324 | 1,449 | 750 | 23,074 | 1,615 | 24,690 | 166 |
| | ອ/ຊ ທຳມະດາ | $ 0.7751 | 11,942 | 1,791 | 687 | 520 | 1,700 | 16,640 | 1,009 | 800 | 17,440 | 1,221 | 18,661 | 211 |
| | ກາຊວນ | $ 1.0315 | 15,892 | 795 | - | 520 | - | 17,207 | 1,168 | 600 | 17,807 | 1,246 | 19,053 | 78 |

**ບໍລິສັດ ຈຳໜ່າຍພາຍໃນ (ຫ້ອງ 14–18)**

| ບ່ອນ | ຊະນິດ | 14 ຄ່າ ບໍລິການ | 15 ບໍ່ລວມ ອມພ | 16 ອມພ 7% | 17 ລວມ ອມພ | 18 ອມພ ມອບຕື່ມ |
|---|---|---|---|---|---|---|
| ນ.ວ | ອ/ຊ ພິເສດ | 600 | 23,581 | 1,651 | 25,230 | 42 |
| | ອ/ຊ ທຳມະດາ | 650 | 17,995 | 1,260 | 19,250 | 46 |
| | ກາຊວນ | 400 | 18,115 | 1,268 | 19,380 | 28 |
| ທ່າງ່ອນ | ອ/ຊ ພິເສດ | 600 | 23,610 | 1,653 | 25,260 | 42 |
| | ອ/ຊ ທຳມະດາ | 650 | 18,024 | 1,262 | 19,290 | 46 |
| | ກາຊວນ | 400 | 18,142 | 1,270 | 19,410 | 28 |
| ສະຫວັນ | ອ/ຊ ພິເສດ | 600 | 23,610 | 1,653 | 25,260 | 42 |
| | ອ/ຊ ທຳມະດາ | 650 | 18,024 | 1,262 | 19,290 | 46 |
| | ກາຊວນ | 400 | 18,142 | 1,270 | 19,410 | 28 |
| ຈຳປາສັກ | ອ/ຊ ພິເສດ | 600 | 23,638 | 1,655 | 25,290 | 42 |
| | ອ/ຊ ທຳມະດາ | 650 | 18,053 | 1,264 | 19,320 | 46 |
| | ກາຊວນ | 400 | 18,170 | 1,272 | 19,440 | 28 |
| ບໍ່ແກ້ວ | ອ/ຊ ພິເສດ | 600 | 23,674 | 1,657 | 25,330 | 42 |
| | ອ/ຊ ທຳມະດາ | 650 | 18,090 | 1,266 | 19,360 | 46 |
| | ກາຊວນ | 400 | 18,207 | 1,274 | 19,480 | 28 |
| ຊຽງຂວາງ | ອ/ຊ ພິເສດ | 600 | 23,755 | 1,663 | 25,420 | 42 |
| | ອ/ຊ ທຳມະດາ | 650 | 18,174 | 1,272 | 19,450 | 46 |
| | ກາຊວນ | 400 | 18,289 | 1,280 | 19,570 | 28 |
| ໄຊຍະບູລີ | ອ/ຊ ພິເສດ | 600 | 23,674 | 1,657 | 25,330 | 42 |
| | ອ/ຊ ທຳມະດາ | 650 | 18,090 | 1,266 | 19,360 | 46 |
| | ກາຊວນ | 400 | 18,207 | 1,274 | 19,480 | 28 |

**ນ້ຳມັນເຊື້ອໄຟ (ຫ້ອງ 19–25)**

| ບ່ອນ | ຊະນິດ | 19 ຄ່າ ບໍລິການ | 20 ບໍ່ລວມ ອມພ | 21 ອມພ 7% | 22 ປະຈຸບັນ | 23 ລວມ ອມພ (ສະເໜີ) | 24 ອມພ ມອບຕື່ມ | 25 ເພີ່ມ/ຫຼຸດ |
|---|---|---|---|---|---|---|---|---|
| ນ.ວ | ອ/ຊ ພິເສດ | 600 | 24,181 | 1,693 | **25,750** | **25,870** | 42 | 120 |
| | ອ/ຊ ທຳມະດາ | 650 | 18,645 | 1,305 | **19,240** | **19,950** | 46 | 710 |
| | ກາຊວນ | 400 | 18,515 | 1,296 | **18,860** | **19,810** | 28 | 950 |
| ທ່າງ່ອນ | ອ/ຊ ພິເສດ | 600 | 24,210 | 1,695 | **25,780** | **25,900** | 42 | 120 |
| | ອ/ຊ ທຳມະດາ | 650 | 18,674 | 1,307 | **19,270** | **19,980** | 46 | 710 |
| | ກາຊວນ | 400 | 18,542 | 1,298 | **18,890** | **19,840** | 28 | 950 |
| ສະຫວັນ | ອ/ຊ ພິເສດ | 600 | 24,210 | 1,695 | **25,780** | **25,900** | 42 | 120 |
| | ອ/ຊ ທຳມະດາ | 650 | 18,674 | 1,307 | **19,270** | **19,980** | 46 | 710 |
| | ກາຊວນ | 400 | 18,542 | 1,298 | **18,890** | **19,840** | 28 | 950 |
| ຈຳປາສັກ | ອ/ຊ ພິເສດ | 600 | 24,238 | 1,697 | **25,810** | **25,930** | 42 | 120 |
| | ອ/ຊ ທຳມະດາ | 650 | 18,703 | 1,309 | **19,300** | **20,010** | 46 | 710 |
| | ກາຊວນ | 400 | 18,570 | 1,300 | **18,920** | **19,870** | 28 | 950 |
| ບໍ່ແກ້ວ | ອ/ຊ ພິເສດ | 600 | 24,274 | 1,699 | **25,850** | **25,970** | 42 | 120 |
| | ອ/ຊ ທຳມະດາ | 650 | 18,740 | 1,312 | **19,340** | **20,050** | 46 | 710 |
| | ກາຊວນ | 400 | 18,607 | 1,302 | **18,960** | **19,910** | 28 | 950 |
| ຊຽງຂວາງ | ອ/ຊ ພິເສດ | 600 | 24,355 | 1,705 | **25,940** | **26,060** | 42 | 120 |
| | ອ/ຊ ທຳມະດາ | 650 | 18,824 | 1,318 | **19,430** | **20,140** | 46 | 710 |
| | ກາຊວນ | 400 | 18,689 | 1,308 | **19,050** | **20,000** | 28 | 950 |
| ໄຊຍະບູລີ | ອ/ຊ ພິເສດ | 600 | 24,274 | 1,699 | **25,850** | **25,970** | 42 | 120 |
| | ອ/ຊ ທຳມະດາ | 650 | 18,740 | 1,312 | **19,340** | **20,050** | 46 | 710 |
| | ກາຊວນ | 400 | 18,607 | 1,302 | **18,960** | **19,910** | 28 | 950 |

ໝາຍເຫດ : ອັດຕາແລກປ່ຽນ ທ/ຄ ການຄ້າຕ່າງປະເທດລາວ ມະຫາຊົນ ມື້ຄິດໄລ່ໂຄງສ້າງ ຄັ້ງວັນທີ 31/08/2022 = 15,407 ກີບ/ໂດລາສະຫະລັດ

| | ອ/ຊ ພິເສດ | ອ/ຊ ທຳມະດາ | ກາຊວນ |
|---|---|---|---|
| ພາສີ | 20% | 15% | 5% |
| ອກຊ | 40% | 5% | 0% |
| ອມພ | 7% | 7% | 7% |

ຫົວໜ້າກົມ

ພູວຽງ ພົງສາ